1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1183 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 28.10.2020

ກະຊວງອຸດສາຫະກຳ ແລະ ການຄ້າ
ຮັບ ເລກທີ 2133
ວັນທີ 29/10/2020

# ແຈ້ງການ

**ຮຽນ:** ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ເຄົາລົບ.

**ເລື່ອງ:** ທິດຊີ້ນຳ ກ່ຽວກັບການນຳເຂົ້າ ສົ່ງອອກຕໍ່ສິນຄ້າປະເພດໝາກໄມ້ສົດ ທີ່ນຳເຂົ້າຈາກປະເທດໄທ ເພື່ອສົ່ງອອກຕໍ່ໄປປະເທດຫວຽດນາມ ໃສ່ລົດບັນທຸກ 10 ລໍ້.

- ອີງຕາມ ເອກະສານລາຍງານ ຂອງກະຊວງການເງິນ ສະບັບເລກທີ 2606/ກງ, ລົງວັນທີ 29 ກັນຍາ 2020.
- ອີງຕາມ ການຕົກລົງ ແລະ ຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 20 ຕຸລາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: " ໃຫ້ກວດເບິ່ງລະອຽດ ຖ້າບໍ່ຂັດກັບນິຕິກຳໃດໜຶ່ງ ກໍ່ເຫັນດີໃຫ້ນຳເຂົ້າ-ສົ່ງອອກຕໍ່ສິນຄ້າປະເພດໝາກໄມ້ສົດ ທີ່ນຳເຂົ້າຈາກປະເທດໄທ ເພື່ອສົ່ງອອກຕໍ່ໄປປະເທດຫວຽດນາມ ໃສ່ລົດບັນທຸກ 10 ລໍ້ ໂດຍໃຫ້ລົດໄທໄປຮອດດ່ານພາສີສາກົນປາຍທາງ ກໍ່ຄືດ່ານພາສີສາກົນນາເພົ້າ (ໜ່ວຍບໍລິການ ແລະ ລະບົບສາງປະຈຳດ່ານພາສີສາກົນນາເພົ້າ) ຈຶ່ງດຳເນີນການຖ່າຍຖ່າຍສິນຄ້າ ຕາມການສະເໜີຂອງກະຊວງການເງິນ. ພ້ອມດຽວກັນນັ້ນ, ກໍ່ໃຫ້ກະຊວງການເງິນ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ແລະ ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກດັ່ງກ່າວ ຢ່າງເຄັ່ງຄັດ ເພື່ອບໍ່ໃຫ້ມີຊ່ອງວ່າງ ແລະ ໃຫ້ປະຕິບັດຕາມມາດຕະການສະກັດກັ້ນ, ຄວບ ຄຸມ ແລະ ຕ້ານການລະບາດພະຍາດ ໂຄວິດ-19 ຢ່າງເຂັ້ມງວດ."

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ 01 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ
4. ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
5. ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ
6. ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ
7. ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ ✓
8. ກະຊວງການຕ່າງປະເທດ 01 ສະບັບ
9. ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ
10. ກະຊວງສາທາລະນະສຸກ 01 ສະບັບ
11. ຄະນະ ຫສນຍ ທ່ານລະ 01 ສະບັບ
12. ກົມຄົ້ນຄວ້າ-ສັງລວມ 01 ສະບັບ
13. ກົມເລຂາ 01 ສະບັບ
14. ກົມກວດກາ 01 ສະບັບ
15. ສຳເນົາ 01 ສະບັບ